ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ
ຫ້ອງການ ຄຊກລ

ນະຄອນຫລວງວຽງຈັນ, ວັນທີ 08 ພະຈິກ 2023

# ບົດບັນທຶກ
# ກອງປະຊຸມວິຊາການ ກ່ຽວກັບການຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 04 ປີ 2023

## I. ວັນເວລາ, ສະຖານທີ່ ແລະ ຜູ້ເຂົ້າຮ່ວມ

ກອງປະຊຸມວິຊາການຄຸ້ມຄອງກ່ຽວກັບການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 04 ປີ 2023 ທີ່ຫ້ອງປະຊຸມຂອງ ຫ້ອງການ ຄຊກລ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ບຸນເພັງ ສີສະຫວັດ, ຮອງຫົວໜ້າຫ້ອງການ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ (ຫ້ອງການ ຄຊກລ) ແລະ ມີຜູ້ເຂົ້າຮ່ວມຄື: ຕາງໜ້າຈາກກະຊວງຖະແຫຼງຂ່າວວັດທະນາທຳ ແລະ ທ່ອງທ່ຽວ ( ກົມສື່ມວນຊົນ, ກົມສິລະປະ ແລະ ການສະແດງ), ຕາງໜ້າຈາກກະຊວງສຶກສາທິການ ແລະ ການກິລາ ( ກົມ ພາລະສຶກສາ, ກົມສາມັນ, ກົມສ້າງຄູ, ກົມສິລະປະ ແລະ ການສະແດງ, ກົມສຶກສານອກລະບົບ ໂຮງຮຽນ, ສະຖາບັນຄົ້ນຄົ້ວເຕັກໂນໂລຢີ..)ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ( ກົມຂະບວນການ), ຊຸ່ງວຊານ ແລະ ວິຊາການ ຈາກ ອົງການສະຫະປະຊາຊາດ ເພື່ອການພັດທະນາ, ຕາງໜ້າຈາກອົງການປະຕິບັດງານທີ່ເຮັດວຽກໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ເຊັ່ນ: ອົງການແມັກ, ອົງການຮາໂລທັດສ, ເອັນພີເອ, ໂຄງການເກັບກູ້ລະເບີດແຫ່ງຊາດ ( ຄກລ) ກອງກວດກູ້ລະເບີດເພື່ອມະນຸດສະທຳກອງທັບ ( ກອງ 58), ອົງການເທີລາລີນາຍຊານ, ອົງການສຶກສາໂລກ ( WE), ນອກຈາກນີ້ຍັງມີຫົວໜ້າໜ່ວຍງານຈາກຫ້ອງການ ຄຊກລ ( ໜ່ວຍງານຄຸ້ມຄອງໂຄສະນາສຶກສາຄວາມສ່ຽງໄພ, ໜ່ວຍງານຄຸ້ມຄອງຖານຂໍ້ມູນ ແລະ ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຈາກ ລບຕ) ແລະ ພະນັກງານວິຊາການຈາກໜ່ວຍງານທີ່ກ່ຽວຂ້ອງ ຂອງຫ້ອງການ ຄຊກລ ເຂົ້າຮ່ວມ ລວມທັງໝົດ 43 ທ່ານ ຍິງ 12 ຄົນ.

## II ຈຸດປະສົງ

- ເພື່ອແລກປ່ຽນບົດຮຽນທາງດ້ານເທັກນິກວິຊາການກ່ຽວກັບວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ, ດ້ານດີ, ດ້ານອ່ອນ ແລະ ຂໍ້ຄົງຄ້າງ.
- ເພື່ອປຶກສາຫາລື ແລະ ປະເມີນກ່ຽວກັບການເກີດອຸປະຕິເຫດ ແລະ ສາເຫດທີ່ພາໃຫ້ເກີດອຸປະຕິເຫດ.
- ລາຍງານຄວາມຄືບໜ້າແຜນໄລຍະຍາວວຽກງານໂຄສະນາສຶກສາຄວາມສ່ຽງໄພ 2024 -2030,
- ຢືນຢັນຜົນຂອງການສຳຫຼວດທັດສະນະຄະຕິ ການປ່ຽນພຶດຕິກຳໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ( KAP Survey );
- ສະຫຼຸບຜົນຂອງການລົງຕິດຕາມຊຸກຍູ້ ແລະ ປຶກສາເລື່ອງເທັກນິກວິຊາການ ວຽກງານໂຄສະນາ;
- ເພື່ອລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ.

- ເພື່ອຍັ້ງຢືນໃນແບບຟອມການລາຍງານເຊັ່ນ: ແບບຟອມວິທະຍຸ, ແບບຟອມ ອສບ, ແບບຟອມລາຍງານຂອງອົງການປະຕິບັດງານ, ການກໍານົດແບບຟອມໂຄສະນາສຶກສາຄວາມສ່ຽງໄພ ເຊື່ອມສານເຂົ້າໃນລະບົບການສຶກສາເພື່ອເຂົ້າໃນຖານຂໍ້ມູນ.
- ເພື່ອລາຍງານການເກີດອຸປະຕິເຫດ ແລະ ຢັ້ງຢືນຕົວເລກເຂົ້າໃນຖານຂໍ້ມູນ.
- ເພື່ອຮັບຟັງບັນຫາການປະຕິບັດງານການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃນໄຕມາດ 04 ປີ 2023 ຂອງອົງການປະຕິບັດງານ ລວມທັງການພົວພັນປະສານງານ ລະຫວ່າງອົງການປະຕິບັດງານ ແລະ ອໍານາດການປົກຄອງທ້ອງຖິ່ນ ແລະ ທິດທາງແຜນການໃນປີ 2024 ເພື່ອໃຫ້ດີຂຶ້ນກວ່າເກົ່າ.
- ບັນຫາອື່ນໆທີ່ກ່ຽວຂ້ອງ ແລະ ຕິດພັນກັບວຽກໂຄສະນາ.

## III ເນື້ອໃນກອງປະຊຸມ

ກອງປະຊຸມໄດ້ໄຂຂຶ້ນຢ່າງເປັນທາງການໃນເວລາ 08:30 ໂມງ. ພາຍຫຼັງທ່ານປະທານກອງປະຊຸມໄດ້ກ່າວເປີດກອງປະຊຸມໄດ້ຮັບຊາບການລາຍງານ ແລະ ປຶກສາຫາລືບັນດາບັນຫາດັ່ງລຸ່ມນີ້:

- ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ລາຍງານການເຄື່ອນໄຫວ ການຈັດຕັ້ງປະຕິບັດວຽກງານໂຄສະນາ ປະຈໍາໄຕມາດ 4 ປີ 2023, ທົບທວນກອງປະຊຸມໃນໄຕມາດ 03 ( ອັນໃດທີ່ຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ ສໍາເລັດ ແລະ ບໍ່ສໍາເລັດ), ລາຍງານຄວາມຄືບໜ້າຂອງແຜນການປະຕິບັດງານໃນໄລຍະຍາວ 2024-2030, ໜ່ວຍງານໂຄສະນາສະເໜີອົງການປະຕິບັດງານອອກຄໍາຄິດເຫັນ ຕໍ່ຜົນການແນະນໍາຂອງ KAP Survey, ຜ່ານແບບຟອມການລາຍງານເຂົ້າໃນຖານຂໍ້ມູນ ເປັນຕົ້ນແມ່ນ ແບບຟອມການລາຍງານຂອງວິທະຍຸ 10 ແຂວງ ທີ່ໄດ້ເຮັດໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ, ແບບຟອມລາຍງານຂອງອາສາສະໝັກບ້ານ, ແບບຟອມການລາຍງານອົງການປະຕິບັດງານ ແລະ ນອກຈາກນີ້ໜ່ວຍງານກໍ່ໄດ້ລາຍງານຜົນຂອງການລົງຕິດຕາມວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ຂອງອົງການປະຕິບັດງານ.
- ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍໄດ້ລາຍງານຄວາມຄືບໜ້າຂອງການເກີດອຸປະຕິເຫດໃນປີ 2023, ຊຶ່ງເຫັນວ່າຕົວເລກຜູ້ຖືກເຄາະຮ້າຍເພີ່ມຂຶ້ນໃນປີ 2023.
- ບັນດາອົງການປະຕິບັດງານ ທີ່ເຂົ້າຮ່ວມ ລາຍງານຜົນການຈັດຕັ້ງປະຕິບັດ ແລະ ບັນຫາການປະຕິບັດງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ໃນໄຕມາດ 04 ແລະ ນໍາສະເໜີທິດທາງແຜນການໃນປີ 2024, ສິ່ງທ້າທາຍ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ບົດຮຽນທີ່ຖອດຖອນໄດ້ ໃນປີ 2023 ພ້ອມຂໍ້ສະເໜີຕ່າງໆ.
- ນອກຈາກນັ້ນຍັງມີພາກສ່ວນອື່ນໆທີ່ໄດ້ແລກປ່ຽນຄໍາຄິດເຫັນ ແລະ ສົນທະນາໃນກອງປະຊຸມ.

## IV. ຂໍ້ຕົກລົງພາຍໃນກອງປະຊຸມ

- ກອງປະຊຸມສະເໜີໃຫ້ອົງການປະຕິບັດງານປະຕິບັດຕາມແຜນກິດຈະກໍາ ທີ່ນອນຢູ່ໃນບົດບັນທຶກຄວາມເຂົ້າໃຈທີ່ໄດ້ເຊັນກັບຫ້ອງການ ຄຊກລ.
- ກອງປະຊຸມສະເໜີອົງການປະຕິບັດງານເພີ່ມທະວີ ວຽກງານປະສານງານຮ່ວມກັນ ລະຫວ່າງອົງການປະຕິບັດງານ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເພື່ອສະດວກໃນການຈັດຕັ້ງປະຕິບັດວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ ໃຫ້ດີຂຶ້ນກວ່າເກົ່າ,
- ກອງປະຊຸມສະເໜີບັນດາອົງການປະຕິບັດງານທົບທວນຄືນກ່ຽວກັບທີມງານໂຄສະນາທີ່ລົງເຮັດວຽກໂຄສະນາເຊັ່ນ: ດ້ານເນື້ອໃນທີ່ຈະໄປໂຄສະນາ, ອຸປະກອນຮັບໃຊ້ການໂຄສະນາ, ນັກໂຄສະນາ ໂດຍໃຫ້ອີງໃສ່ມາດຕະຖານແຫ່ງຊາດເປັນຫຼັກ ເພື່ອເຮັດໃຫ້ວຽກໂຄສະນາໄປໃນທິດທາງດຽວກັນ ແລະ ເພື່ອເປັນການລຸດຜ່ອນອຸປະຕິເຫດ.

- ກອງປະຊຸມສະເໜີໜ່ວຍງານຄຸ້ມຄອງໂຄສະນາ ແລະ ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ເປັນເຈົ້າການຫຼັກ ທົບທວນ ແລະ ປະເມີນຄືນກ່ຽວກັບອຸປະຕິເຫດທີ່ເກີດຂຶ້ນ ສາຍເຫດຫຼັກແມ່ນເກີດຂຶ້ນຍ້ອນຫຍັງ ແລະ ຜູ້ທີ່ໄດ້ຮັບເຄາະຮ້າຍໄດ້ເຂົ້າຮ່ວມຮັບຟັງການໂຄສະນາບໍ່ໃນຜ່ານມາ. ຊຶ່ງຕໍ່ກັບບັນຫາດັ່ງກ່າວກໍ່ໄດ້ມີການປຶກສາຫາລືໃນກອງປະຊຸມ ແລະ ເຫັນວ່າອຸປະຕິເຫດເກີດຂຶ້ນສ່ວນຫຼາຍແມ່ນຈາກການຂຸດດິນໃນບ່ອນທີ່ບໍ່ປອດໄພ, ຜູ້ທີ່ເກີດອຸປະຕິເຫດສ່ວນຫຼາຍແມ່ນບໍ່ໄດ້ເຂົ້າຮ່ວມຮັບຟັງການໂຄສະນາເຜີຍແຜ່ຄວາມຮູ້ ແລະ ຄວາມອັນຕະລາຍ ຂອງ ລບຕ, ບາງກໍລະນີກໍ່ເກີດຂຶ້ນຍ້ອນ
- ກອງປະຊຸມສະເໜີມາຍັງອົງການປະຕິບັດງານກວດກາເບິ່ງນັກໂຄສະນາສຶກສາຄວາມສ່ຽງໄພ ທີ່ລົງໂຄສະນາໄດ້ຜ່ານການຝຶກອົບຮົມຫຼັກສູດວິຊາ ລບຕ ມາກ່ອນບໍ່; ຖ້າຍັງບໍ່ເຄີຍຜ່ານຄວນມີການຝຶກຄືນ ເພື່ອລົງເລິກດ້ານເນື້ອໃນການໂຄສະນາ ເຮັດໃຫ້ຜູ້ຟັງເຂົ້າໃຈຫຼາຍຂຶ້ນ.
- ບ້ານທີ່ມີອຸປະຕິເຫດເກີດຂຶ້ນແມ່ນສະເໜີໃຫ້ທີມງານໂຄສະນາທີ່ຮັບພິຊອບໃນຂອບເຂດດັ່ງກ່າວນັ້ນລົງໂຄສະນາຄືນຕື່ມ.
- ກອງປະຊຸມເຫັນດີ ໃຫ້ໜ່ວຍງານຄຸ້ມຄອງໂຄສະນາ ແລະ ໜ່ວຍງານຄຸ້ມຄອງຖານຂໍ້ມູນ, ປຶກສາຫາລື ລົງເລິກ ແລະ ເອກະພາບດ້ານແບບຟອມການລາຍງານ ແລະ ພວກເຮົາຈະມີການຝຶກອົບຮົມໃຫ້ອົງການປະຕິບັດງານ.
- ກອງປະຊຸມສະເໜີຂຶ້ນແຜນກິດຈະກຳປະຈຳໄຕມາດ ລະອຽດໃນປີ 2024 ເພື່ອສະດວກໃນການຕິດຕາມຊຸກຍູ້ ແລະ ການຈັດຕັ້ງປະຕິບັດ.

## V. ຂໍ້ສະເໜີ.

- ກອງປະຊຸມສະເໜີ ໃຫ້ໜ່ວຍງານຄຸ້ມຄອງໂຄສະນາເປັນເຈົ້າການ ໃນການຕິດຕາມຊຸກຍູ້ ບັນດາອົງການປະຕິບັດງານ ເພາະບາງອົງການບໍ່ໄປຕາມແຜນເຄື່ອນໄຫວ ເຊິ່ງສະແດງອອກໃນຕົວຊີ້ວັດໜ້າວຽກ;
- ສະເໜີອົງການປະຕິບັດງານສົ່ງແຜນ 2024 ໃຫ້ ຫ້ອງການ ຄຊກລ.
- ອົງການເອັນພີເອ ຂໍສະເໜີໃຫ້ຫ້ອງການ ຄຊກລ ພິຈາລະນາມອບບ້ານທີ່ເກີດອຸປະຕິເຫດໃນແຂວງ ສາລະວັນ ແລະ ເຊກອງ ໃນປີ 2023 ໃຫ້ອົງການ ເອັນພີເອ ດຳເນີນໜ້າວຽກໂຄສະນາ (ຖ້າບ້ານດັ່ງກ່າວຍັງບໍ່ແມ່ນບ້ານທີ່ມອບໃຫ້ ຄກລ) ເນື່ອງຈາກວ່າໃນປີ 2024 ທາງອົງການມີແຜນດຳເນີນໜ້າວຽກຢູ່ 53 ບ້ານ ແລະ ເຮົາຄາດຄະເນວ່າພວກເຮົາສາມາດດຳເນີນໜ້າວຽກໂຄສະນາສຳເລັດກ່ອນທ້າຍໄລຍະການປະຕິບັດງານຕາມບົດບັນທຶກຄວາມເຂົ້າໃຈ.
- ອົງການຮາໂລ ຮັບຮູ້ການລາຍງານວ່າ ປົດສະເຕີແຈກຢາຍ ໃຫ້ບ້ານນັ້ນບໍ່ພຽງພໍ ເທື່ອ. ສະນັ້ນ, ຂໍໃຫ້ ຄຊກລ ພິມເປັນຜ້າ ວາຍນິວ ຈະດີທີ່ສຸດ ສຳລັບ ອົງກອນ ພວກເຮົາ ແມ່ນ ຜະລິດເປັນ ຜ້າວາຍນິວ ແລະບໍ່ມີບັນຫາການຂາດຂອງປີສະເຕີ້.
- ການຄົ້ນຄ້ວາອັບເດດມາດຕະຖານແຫ່ງຊາດ ແມ່ນຈະໄດ້ມີກອງປະຊຸມປຶກສາຫາລືໃນປີ 2024 ສະເພາະວຽກງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ.
- ອົງການຮາໂລທັດສ ສະເໜີໃຫ້ມີການສາທິດ ໃນເວລາລົງໄປເຮັດກິດຈະກຳໂຄສະນາສຶກສາຄວາມສ່ຽງໄພ.
- ອົງການຮາໂລ ຢາກຂໍຮູ້ເພີ່ມເຕີມກ່ຽວກັບ ການໃສ່ຕາໃຫ້ແນມເຫັນຂອງຜູ້ໄດ້ຮັບເຄາະຮ້າຍ ຈາກ ລບຕ ຄືດັ່ງທີ່ໄດ້ແຈ້ງໃຫ້ພວກເຮົາຮັບຮູ້ໃນກອງປະຊຸມຜ່ານມາ. ພວກເຮົາເຂົ້າໃນໃນຂັ້ນຕອນການສະເໜີ ແຕ່ຢາກຮູ້ວ່າ ຄົນເຈັບຜູ້ໄດ້ມາເຫັນຮຸ່ງຄືນນັ້ນ ເປັນຕາບອດບໍ່ສະໜິດບໍ, ຫລືຕາບອດສະໜິດ. ເພາະຜູ້ເຄາະຮ້າຍຢູ່ເຊໂປນ ແລະ ວິລະບູລີ ມີທັງບອດສະໜິດ ແລະບອດບໍ່ສະໜິດ ເພື່ອທາງພວກເຮົາຈະໄດ້ແນະນຳຜູ້ເຄາະ

ຮ້າຍຖືກຈຸດ. ຕໍ່ກັບບັນຫານີ້ກອງປະຊຸມກໍ່ໄດ້ແນະນຳໃຫ້ປະສານງານໄປທາງໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍເລີຍ.

- ກອງປະຊຸມໄດ້ສະເໜີໃຫ້ຫ້ອງການ ຄຊກລ ຈັດການປະຊຸມສະເພາະເພື່ອລົງເລິກ ຄົ້ວຄວ້າ ກ່ຽວກັບໂປດສະເຕີ ລະເບີດຝັງດິນ (ມີນ).
- ອົງການ ເທີຣາ ຂໍເໜີໃຫ້ຫ້ອງການ ຄຊກລ, ກະຊວງຖະແຫຼງຂ່າວວັດທະນາທຳ ແລະ ທ້ອງທ່ຽວ, ກະຊວງສຶກສາທິການ ແລະ ການກິລາ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ລົງຢ້ຽມຢາມວຽກງານໂຄສະນາຂອງອົງການເທີລາລິນາຍຊານ ໂດຍອົງການເທີລາລິນາຍຊານຈະເປັນຜູ້ຮັບພິຊອບອັດຕາກິນຢູ່ພັກເຊົາ ແລະ ຄ່ານໍ້າມັນລົດເດີນທາງ.
- ສະເໜີທາງ ອົງການ ສປຊ ເຊີນຊ່ຽວຊານມາອະທິບາຍ ຝຶກອົບຮົມ ກ່ຽວກັບທິດສະດີການປ່ຽນແປງພຶດຕິກຳ ແລະ ອະທິບາຍຜົນຂອງ KAP Survey ໃຫ້ທີມງານອົງການປະຕິບັດໄດ້ຈັດຕັ້ງປະຕິບັດຕາມ.
- ສະເໜີໃຫ້ໜ່ວຍງານຊ່ວຍເຫຼືອຜູ້ຖືກເຄາະຮ້າຍກວດກາຄືນກ່ຽວກັບເບີສາຍດ່ວນ 1603, ຈະແຈກຢາຍໃຫ້ແຕ່ລະແຂວງ ບໍ່ຫຼື ຈະເຮັດແນວໃດ ໃນແຜນຕໍ່ໜ້າ.
- ກະຊວງສຶກສາທິການ ແລະ ການກິລາ ສະເໜີໃຫ້ ຄຊກລ ພິຈາລະນາ ເອົາ ວິຊາ ລບຕ ທີ່ບໍ່ໄດ້ເອົາເຂົ້າໃນ 08 ແຂວງ ທົ່ວປະເທດ ເຂົ້າເພີ່ມ.
- ສະເໜີກະຊວງຖະແຫຼງຂ່າວວັດທະນາທຳ ແລະ ທ້ອງທ່ຽວ ເປັນເຈົ້າການໃນການປະສານງານ, ຈັດຕັ້ງປະຕິບັດ, ຕິດຕາມ ກັບວິທະຍຸ 10 ແຂວງ ແລະ ເປັນເຈົ້າການຫຼັກ.
- ອົງການ WE ສະເໜີເອົາສະປອດໂຄສະນາລົງໃນລາຍການວິທະຍຸ, ຊຶ່ງກອງປະຊຸມສະເໜີໃຫ້ ເຮັດໜັງສືສະເໜີມາຍັງຫ້ອງການ ຄຊກລ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອລົງໂຄສະນາດັ່ງກ່າວ.
- ອົງການເທີລາລິນາຍຊານ ສະເໜີໃຫ້ ເອົາເດັກນ້ອຍອາຍຸຕັ້ງແຕ່ 03 ປີ ເຂົ້າໃນຜົນຂອງ KAP Survey
- ກອງປະຊຸມສະເໜີແຜນການປະຕິບັດງານໃນບົດບາດຍິງຊາຍໃນປີ 2024.

## VI. ສະຫຼຸບ

ປະທານກອງປະຊຸມ ໄດ້ກ່າວປິດກອງປະຊຸມ. ຫຼັງຈາກນັ້ນ, ທ່ານໄດ້ກ່າວຄຳຂອບໃຈບັນດາຜູ້ແທນທີ່ເຂົ້າຮ່ວມກອງປະຊຸມວິຊາການຄັ້ງນີ້ ພ້ອມທັງອວຍພອນໃຫ້ບັນດາຜູ້ແທນຈາກອົງການປະຕິບັດງານ ລບຕ ມີສຸຂະພາບເຂັ້ມແຂງ, ພາລະນາໄນສົມບູນ ແລະ ກ່າວປິດກອງປະຊຸມ.

ກອງປະຊຸມໄດ້ປິດລົງໃນ ວັນທີ 24 ພະຈິກ 2023 ມື້ດຽວກັນ.

ປະທານກອງປະຊຸມ

ຫ້ອງການ ຄຊກລ

ບຸນເພັງ ສີສະຫວັດ

ຜູ້ບັນທຶກກອງປະຊຸມ / ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພ ຈາກ ລບຕ